**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ

ພະແນກໂຍທາທິການ ແລະ ຂົນສົ່ງ

ເລກທີ: 7941 /ຍທຂ. ນວ

ລົງວັນທີ: 06 AUG 2024

## ໜັງສືຢັ້ງຢືນ

**ຮຽນ: ທ່ານ ຫົວໜ້າ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງສີສັດຕະນາກ**

**ເລື່ອງ: ຢັ້ງຢືນຕອນດິນທີ່ຕິດກັບແລວການກໍ່ສ້າງໂຄງການປ້ອງກັນຕາຝັ່ງເຈື່ອນ ແລະ ພັດທະນາແຄມຂອງ ໄລຍະ II.**

- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າຄອງ ນະຄອນຫຼວງວຽງຈັນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ສະບັບເລກທີ 444/ຈນວ, ລົງວັນທີ 7 ເມສາ 2023;
- ອີງຕາມ ຂໍ້ຕົກລົງ ແຕ່ງຕັ້ງຄະນະວິຊາການຊ່ວຍວຽກໄກ່ເກ່ຍສິ່ງກີດຂວາງໂຄງການປ້ອງກັນຕາຝັ່ງເຈື່ອນ ແລະ ພັດທະນາແຄມຂອງ ໄລຍະ II ສະບັບເລກທີ 410/ຈນວ, ລົງວັນທີ 9 ມິຖຸນາ 2021;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງສີສັດຕະນາກ ສະບັບເລກທີ 388/ຫຊສ.ສສນ ລົງວັນທີ 12 ມິຖຸນາ 2024.

ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ໃນນາມເຈົ້າຂອງໂຄງການປ້ອງກັນຕາຝັ່ງເຈື່ອນ ແລະ ພັດທະນາແຄມຂອງ ໄລຍະ II ຂໍແຈ້ງມາຍັງທ່ານຊາບວ່າ: ໃນວັນທີ 24 ກໍລະກົດ 2024 ຄະນະຄຸ້ມຄອງໂຄງການປ້ອງກັນຕາຝັ່ງເຈື່ອນ ແລະ ພັດທະນາແຄມຂອງ ໄລຍະ II, ຄະນະວິຊາການຊ່ວຍວຽກໄກ່ເກ່ຍສິ່ງກີດຂວາງໂຄງການ, ໄດ້ສົມທົບກັບວິຊາການຈາກຂະແໜງເຄຫາຜັງເມືອງ, ນ້ຳປະປາ ແລະ ສຸຂາພິບານ ແລະ ນາຍບ້ານຈອມແຈ້ງ ລົງກວດກາຕອນດິນ ຢູ່ບ້ານຈອມແຈ້ງ ເມືອງສີສັດຕະນາກ ຕາມໜັງສະເໜີ ຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງມີສັດຕະນາກ ໃບຕາດິນອອກຊື່ ທ້າວ ບັນສັກ ແກ້ວມີສີ ເລກທີໃບຕາດິນ 228 ລົງວັນທີ 20 ກຸມພາ 2019, ແຜນທີ່ຕາດິນເລກທີ 5564-IV-N-54, ຕອນດິນເລກທີ 44 ເນື້ອທີ່ 133 ຕາແມັດ, ຜ່ານການລົງກວດກາຕອນດິນຕາມບົດບັນທຶກກວດກາສະຖານທີ່ ເຫັນວ່າຕອນດິນດັ່ງກ່າວບໍ່ນອນໃນຂອບເຂດການກໍ່ສ້າງຂອງໂຄງການປ້ອງກັນຕາຝັ່ງເຈື່ອນ ແລະ ພັດທະນາແຄມຂອງ ໄລຍະ II, ແຕ່ສຳລັບພື້ນທີ່ແຄມຂອງຕິດກັບຂອບເຂດຕອນດິນດັ່ງກ່າວແມ່ນນອນໃນເຂດພັດທະນາຂອງໂຄງການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບດ້ວຍ.

**ຫົວໜ້າພະແນກ**

ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ

**ບຸນຍະວັດ ນິຣະໄຊຍ໌**